ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ເມືອງວຽງທອງ ສ້າງຄວາມເຂັ້ມແຂງໃຫ້ກອງທຶນສິນເຊື່ອ 10 ບ້ານ



ໃນອາທິດຜ່ານມານີ້; ເມືອງວຽງທອງ, ແຂວງບໍລິຄຳໄຊ ໄດ້ຝຶກອົບຮົມການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກອງທຶນສິນເຊື່ອບ້ານຂອງແຜນງານລາວ 030 ໃນຫົວຂໍ້ການຄຸ້ມຄອງທີ່ດີ, ການບໍລິຫານສິນເຊື່ອ ແລະ ໜີ້ຊັກຊ້າ, ການຄວບຄຸມ ແລະ ກວດສອບພາຍໃນ ໃຫ້ 10 ບ້ານ ທີ່ນອນຢູ່ໃນໂຄງການ ລາວ 030 ຊຶ່ງໄດ້ດຳເນີນ 3 ວັນ ໂດຍການເຂົ້າຮ່ວມເປັນປະ ທານຂອງທ່ານ ອາລຸນສັກ ປະທຳມະວົງ ຮອງເຈົ້າເມືອງ/ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ, ມີປະທານສະຫະພັນແມ່ຍິງເມືອງ, ທີ່ປຶກສາຈາກອົງການອາດາ, ຜູ້ປະສານງານການເງິນຊົນນະບົດສະມາຄົມການເງິນຈຸລະພາກ, ບັນດາຄະນະບ້ານ, ຄະນະກອງທຶນສິນເຊື່ອບ້ານ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ການຝຶກອົບຮົມການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກອງທຶນສິນເຊື່ອບ້ານ, ການຄຸ້ມຄອງ, ບໍລິຫານກອງທຶນສິນເຊື່ອ ເຮັດໃຫ້ບັນດານັກຝຶກອົບຮົມໄດ້ຮັບຮູ້ຮູບແບບການບໍລິຫານກອງທຶນໃຫ້ຖືກຕ້ອງ ຕາມລະບຽບຫຼັກການ ແລະ ສອດ ຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ກໍ່ຄືແຜນພັດທະນາແມ່ຍິງໄລະຍະ 5 ປີ. ພ້ອມນັ້ນ, ກໍ່ເປັນການປັບປຸງມາດຕະຖານການດຳລົງຊີວິດ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນພາຍໃນເມືອງວຽງທອງ ກໍ່ຄືບ້ານເປົ້າໝາຍຂອງແຜນງານລາວ/030 ຮັບການສ້າງຄວາມເຂັ້ມແຂງໃຫ້ກັບຊຸມຊົນ ໂດຍສະເພາະຄະນະກອງທຶນສິນເຊື່ອບ້ານ ໃນການຄຸ້ມຄອງບໍລິຫານເງິນກອງທຶນສິນເຊື່ອໃຫ້ມີຄວາມຍືນຍົງ ສາມາດຕອບສະໜອງເງິນທຶນໃນຮູບແບບສິນເຊື່ອໃຫ້ແກ່ຄົວເຮືອນ, ສະມະຊິກ ເພື່ອນຳໄປລົງທຶນໃສ່ກິດຈະກຳສ້າງລາຍຮັບ ທີ່ມີຜົນກຳໄລ ແລະ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃຫ້ດີຂຶ້ນ ເພື່ອຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ ຕາມມາດຕະຖານຂອງພັກ-ລັດວາງອອກ.

ຂະນະດຽວກັນ, ຍັງມີຄວາມສ່ຽງຫຼາຍດ້ານ ທີ່ຈະເຮັດໃຫ້ບັນລຸຕາມແຜນທີ່ຕັ້ງໄວ້, ເປັນຕົ້ນການສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳກອງທຶນສິນເຊື່ອບ້ານ, ການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການລັດ ແລະ ຄະນະກອງທຶນສິນເຊື່ອບ້ານ, ການຄວບຄຸມຄຸນນະພາບຂອງໂຄງການ ແລະ ກິດຈະກຳໃຫ້ໄດ້ ຕາມມາດຖານ, ພ້ອມດຽວກັນນີ້ ເຮັດແນວໃດໃຫ້ ການປະຕິບັດແຜນງານ ລາວ/030 ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງໃນແຕ່ລະໄລຍະ, ພ້ອມທັງມີການຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ແລະ ມີປະສິດທິພາບ, ປະສິດທິຜົນສູງ.

ໂອກາດດັ່ງກ່າວ, ທ່ານຮອງເຈົ້າເມືອງ, ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ໄດ້ຮຽກຮ້ອງມາຍັງບັນດານັກສຳມະນາກອນ ຈົ່ງນຳເອົາບົດຮຽນ ແລະ ຄວາມຮູ້ໃນການຝຶກອົບຮົມການຈັດຕັ້ງປະຕິບັດກອງທຶນສິນເຊື່ອຂອງແຜນງານລາວ/030 ໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ເຮັດໃຫ້ກອງທຶນສິນເຊື່ອບ້ານ ມີຄວາມເຂັ້ມແຂງ, ປະຊາຊົນມີຄວາມຜາສຸກ ປະກອບສ່ວນເຂົ້າໃນການພັດທະນາບ້ານເມືອງ ຕາມແນວທາງຂອງພັກ ແລະ ລັດຖະບານວາງອອກໃນແຕ່ລະໄລຍະ.

# ຂ່າວ: ຣັດສະໝີ ດວງສັດຈະ